# ໜັງສືເອເຊກຽນ (ເປຊະກິເອັນ)

## ຫລືປຶ້ມຜູ້ທຳນວາຍແຫ່ງ ຜູ້ຖືກເນຣະເທດ

| | |
|---|---|
| ໃຈຄວາມສຳຄັນ | ຣັສມີ |
| ຂໍ້ຄວາມສຳຄັນ | ນີພ:໔ຝ |
| ຈຳນວນບົດ | ໔໘ ບົດ |
| ເຣື່ອງເກີດຂຶ້ນແຕ່ປີ | ກ່ອນ ຄ.ສ. ໕໙໓–໕໗໓ |
| ເຣື່ອງເກີດຂຶ້ນທີ່ | ເມືອງບາບີໂລນ |
| ຈັກກະພັດທີ່ມີອຳນາດ | ບາບີໂລນ |
| ເອເຊກຽນ ແປວ່າ | ຜູ້ພຣະເຈົ້າຊົງຊູແຮງ |
| ເປັນຜູ້ທຳນວາຍທີ່ | ໑໓ |
| ເປັນສມັຍດຽວກັນກັບ | ດານຽນ |

## ໑. ວ່າດ້ວຍຄາວສມັຍພວກປະຊາຖືກເນຣະເທດ

ພວກຢູເດຖືກເນຣະເທດເປັນເວລານານເຖິງ ໗໐ ປີ ຊຶ່ງຖືກຕ້ອງຕາມພວກທຳນວາຍບາງຄົນໄດ້ບອກໄວ້ລ່ວງໜ້າແລ້ວຄື ເອຊາອີ ໖:໑໑–໑໓; ນີພ:ຝ ມີເກ ໔:໑໐ ເຢເຣມີ ໒໕:໑໑–໑໓ ແຕ່ຕ້ອງເຂົ້າໃຈວ່າເຣື່ອງນີ້ໄດ້ຕົກຖືກແຕ່ຕະກູນຢູດາແລະເບັນຢາມິນເທົ່ານັ້ນ. ຊຶ່ງພວກເຮົາເຄີຍເອີ້ນຄົນພວກນີ້ວ່າ ພວກຢູດາຫລືຕະກູນຢູດາຫລືອານາຈັກພາກໃຕ້ ແລະ ໃພດເຂົ້າໃຈອີກວ່າພວກຢູດາເຫລົ່ານີ້ ບໍ່ແມ່ນ ຖືກເນຣະເທດ ໄປພຽງ

ເທື່ອແຮງໂລດແຕ່ ໄດ້ ຖືກກະສັດເນບູກາດເນຊາເຣຄອບຄຸມ ໄປເຖິງສາມເທື່ອຄື:

## ເທື່ອທີນຶ່ງເອົາໄປໃນປີ ໖໐໖ ກ່ອນພຣະເຢຊູຄຣິດ

ຊຶ່ງເປັນຄາວສະໄມຂອງກະສັດເຢໂຮຢາກີມ ຄືກະສັດເນບູກາດເນຊາເຣໄດ້ເຂົ້າໄປໃນກຸງເຢຣູຊາເລັມ ແລ້ວໄດ້ຈັບເອົາດານຽນກັບເພື່ອນຝູງຂອງເພິ່ນໄປ (໒ ຂ່າວຄາວ ໓໖:໒–໗ ດານຽນ ໑:໑–໓.)

## ເທື່ອທີສອງເອົາໄປໃນປີ ໕໙໗

ຄືກະສັດ ເນບູ ກາດ ເນຊາເຣໄດ້ ເຂົ້າໄປ ໃນ ກຸງ ເຢຣູຊາເລັມ ອີກ ແລ້ວໄດ້ຈັບເອົາກະສັດເຢກັບຄົນລຳຄັນປະມານ ໑໐.໐໐໐ ຄົນ ສົ່ງໄປເມືອງບາບີໂລນ (ກະສັດທີສອງ ໒໔:໑໔–໑໖)

## ເທື່ອທີສາມເອົາໄປໃນປີ ໕໘໖

ຊຶ່ງເປັນຄາວສະໄມຂອງກະສັດເຊເດເຊັຍເຊ ຄືກອງທັບຂອງເນບູກາດເນຊາເຣໄດ້ເຂົ້າລ້ອມກຸງເຢຣູຊາເລັມໄວ້ເຖິງ ໑໘ ເດືອນ ແລ້ວພວກເຂົາໄດ້ເອົາວິຫານ ຂອງ ກະສັດຊາໂລໂມນໄດ້ທຳລາຍກຸງເຢຣູຊາເລັມ ແລະໄດ້ຈັບເອົາພົລເມືອງທັງໝົດໄປ ຍັງບໍ່ຍໃຫ້ເຫລືອໄວ້ແຕ່ຄົນທຸກຍາກລາງຄົນເທົ່ານັ້ນ (໒ ກະສັດ ໒໔:໑໘–໒໕:໒໑)

ພວກເຮົາຕ້ອງ ນັບຈຳນວນປີ ທີ່ ພວກຢູດາເປັນທາດທີ່ ເມືອງບາບີໂລນຕັ້ງແຕ່ປີ ໖໐໖ ຈົນເຖິງປີ ໕໓໖ ເວລາກະສັດຊີຣເຊຣະນຸຍາດໃຫ້ພວກເຂົາຫລັບມາເມືອງເຢຣູຊາເລັມ

## ໒. ວ່າດ້ວຍພວກທີ່ຖືກກວາດຕ້ອນໄປເມືອງ ເທລາບິບ

໑:໑; ໓:໑໕

ໃນໜັງສື ຄຳເພງ ບົດທີ ໑໓໗:໑ ພວກເຮົາຮູ້ຈັກຄວາມນຶກຄິດ ຂອງພວກທີ່ຖືກກວາດຕ້ອນໄປຈາກກຸງເຢຣູຊາເລັມວ່າ ພວກເຂົາມີຄວາມ ທຸກໃຈແລະຮ້ອງໄຫ້ເມື່ອລະນຶກເຖິງເມືອງຊີໂອນ (ຄືວ່າເມືອງເຢຣູຊາເລັມ) ພາຍຫລັງຕໍ່ມາພວກເຂົາພາກັນຫລົງລືມພຣະເຈົ້າ ເພາະພວກເຂົາ ບໍ່ມີບ່ອນທີ່ຈະຂາບໄຫວ້ແລະປົວຣະບັດພຣະອົງ ພວກເຂົາໄດ້ຕົກຢູ່ໃນສິ່ງ ແວດລ້ອມອັນບໍ່ດີຂອງຊາວບາບີໂລນ ສນັ້ນພວກເຂົາຈຶ່ງໄດ້ຫລົງລືມ ພຣະເຈົ້າ ແຕ່ພຣະເຈົ້າກໍບໍ່ຊົງປະຖິ້ມພວກເຂົາໂດຍຊົງໂຜດໃຫ້ພວກເຂົາ ມີຄົນນຶ່ງຊື່ເອເຊກຽນເປັນຜູ້ຕັກເຕືອນແລະເລົ້າໂລມຄວາມເຊື່ອຂອງເຂົາ

## ໓. ວ່າດ້ວຍປວັດເອເຊກຽນ

ເອເຊກຽນເປັນລູກຂອງປະໂລຫິດຜູ້ນຶ່ງຊື່ວ່າບູຊີ ເພິ່ນໄດ້ມີເມັຍ ແຕ່ໄດ້ຕາຍເສັຍເພິ່ນຖືກກວາດຕ້ອນໄປເມືອງບາບີໂລນໃນປີ ໕໙໗ ໃນ ບົດທີ ໑:໑ ບອກວ່າ "ເມື່ອປີທີ ໓໐" ຊຶ່ງອາດຈະແມ່ນອາຍຸຂອງເພິ່ນ ເມື່ອເວລາໄດ້ເຫັນນິມິດຄັ້ງຕົ້ນເອເຊກຽນເປັນຜູ້ໄດ້ຮັບຄວາມເຄົາຣົບນັບ ຖືໃນທ່າມກາງພວກເຖົ້າແກ່ ແລະໄດ້ມີເຮືອນຫລັງນຶ່ງເປັນຊັບສົມບັດຂອງ ຕົນເອງ (໘:໑;໑໔:໑;໓໓:໓໑)

## ໔. ວ່າດ້ວຍເວລາພຣະເຈົ້າຊົງເອີ້ນເອົາເອເຊກຽນ

ພຣະເຈົ້າຊົງເອີ້ນເອົາເອເຊກຽນໃຫ້ເຂົ້າທຳງານຂອງພຣະອົງໃນປີ ໕໙໓ ຄືໃນເວລາທີ່ເພິ່ນຢູ່ຣິມແມ່ນ້ຳເກບາເຣ (໑:໑-໓) ພຣະເຈົ້າໄດ້

ຊົງສແດງນິມິດອັນສຳຄັນໃຫ້ເພິ່ນເຫັນຊຶ່ງເພິ່ນເອີ້ນນິມິດນັ້ນວ່າ "ພຣະຣັສມີຂອງພຣະເຢໂຮວາ" (໑:໑໘) ແລ້ວພຣະເຈົ້າຊົງບອກເອເຊກຽນວ່າລູກມະນຸດ ເຮົາໃຊ້ເຈົ້າໄປຫາພວກລູກຫລານອິສຣາເອັນ (໒:໓) ແລະພຣະເຈົ້າໄດ້ຊົງແຕ່ງຕັ້ງເອເຊກຽນໃຫ້ເປັນຜູ້ເຝົ້າຍາມ (໓:໑໗) ເອເຊກຽນໄດ້ທຳນວາຍນານເຖິງ ໒໐ ປີ

## ໕. ວ່າດ້ວຍເນື້ອຄວາມ

໑. ກ່ອນກຸງເຢຣູຊາເລັມຖືກທຳລາຍ ໃນເວລາທີ່ເອເຊກຽນໄດ້ຍິນຄຳເອີ້ນຂອງພຣະເຈົ້ານັ້ນ ກຸງເຢຣູຊາເລັມຍັງບໍ່ທັນຖືກທຳລາຍ ແລະ ຄຳທຳນວາຍຂອງເຢເຣມີທີ່ວ່າກຸງເຢຣູຊາເລັມຈະຖືກທຳລາຍນັ້ນກໍບໍ່ມີໃຜເຊື່ອ ເຫດນັ້ນເອເຊກຽນຈະຕ້ອງບອກພວກເຂົາຢ່າງແຈ່ມແຈ້ງວ່າ ພວກເຂົາ ກັບຄືນກຸງເຢຣູຊາເລັມບໍ່ໄດ້ ເພາະຊາວບາບີໂລນຈະຕີຊນະກຸງເຢຣູຊາເລັມແລ້ວ ກຸງເຢຣູຊາເລັມຈະຖືກໂທດດ້ວຍຄວາມບາບຂອງພວກເຂົາເອງ

### ໖. ພາຍຫລັງກຸງເຢຣູຊາເລັມຖືກທຳລາຍ

(໓໓:໒໑)

ຕັ້ງແຕ່ນັ້ນມາຄຳເທສນາຂອງເອເຊກຽນກໍຜິດຈາກເກົ່າ ຄືແທນທີ່ຈະປະກາດໂທດຂອງພວກເຂົາກໍກັບປະກາດຄຳປະຕິຍານເສັຍ ເພາະເຫັນວ່າຝ່າຍພົລເມືອງໄດ້ຖ່ອມຕົວລົງ ແລະເພິ່ນໄດ້ປະກາດວ່າພຣະເຈົ້າຈະຊົງໂຜດຈັດຕັ້ງພວກຢູດາຂຶ້ນໃໝ່ ໂດຍໄດ້ບອກພວກເຂົາເຖິງເຣື່ອງຜູ້ລ້ຽງ

ຈິງແລະຜູ້ລ້ຽງປອມ.

## ໓. ພາບເວົ້າເຖິງວິນຍານບໍຣິສຸດ

ເອເຊກຽນ ໄດ້ ເວົ້າ ເຖິງ ພຣະວິນຍານບໍຣິສຸດວ່າ ຈະຊົງເຮັດໃຫ້-ຈິດໃຈຂອງຄົນທັງຫລາຍຫລັບມາຫາພຣະເຈົ້າ ການນີ້ປຽບໃສ່ການຄືນຂຶ້ນມາຈາກຕາຍ (ບົດ ໓໗)

## ໔. ວ່າດ້ວຍພາບເປຽບທຽບ

໑. ຄຳວ່າ "ພຣະຣັສມີຂອງພຣະເຢໂຮວາ" ໝາຍຄວາມວ່າ ພຣະເຈົ້າຊົງສຖິດຢູ່ທ່າມກາງພວກເຮົາ (໑:໒໘) ໓:໒໓;໘:໔; ອົພຍົກ ໑໖:໗–໑໐; ໒໔:໑໖–໑໗ ແລະພຣະຣັສມີນັ້ນກໍມີສ່ວນຢູ່ໃນຄວາມບໍຣິສຸດຂອງພຣະອົງ ລມ້ຄວາມບາບທີ່ປາກົດໃນພຣະວິຫານ ຈຶ່ງເຮັດໃຫ້ພຣະຣັສມີເສັຍໄປ (໘:໔;໙:໓)

໒. ຄຳວ່າ "ນ້ຳອັນມີຊີວິດ" ເປັນຄຳປຽບທຽບເຖິງອຳນາດຂອງພຣະວິນຍານຊຶ່ງຈະຊົງໂຜດຊີວິດໃຫ້ແກ່ພວກເຮົາ ຄຳທຳນາຍເລື່ອງ ພຣະວິນຍານບໍຣິສຸດນີ້ມີບາງສ່ວນ ໄດ້ເຖິງທີ່ສຳເຣັດໃນວັນເພັນເຕກອດ

໓. ຄຳວ່າ "ລູກມະນຸດ" ໄດ້ຂຽນໄວ້ໃນໜັງສືນີ້ປະມານ ໑໐໐ ເທື່ອແລະເປັນຄຳເອີ້ນເອເຊກຽນເອງ ຊຶ່ງໝາຍຄວາມວ່າ ພຣະເຈົ້າຊົງໂຜດ ໃຫ້ເພິ່ນມີສ່ວນຢູ່ ກັບພົລເມືອງສ່ວນພຣະ-

ເປຊູກໍຈະມີຊີ ຢ່າງດຽວກັນເມື່ອພຣະອົງຊົງປະທັບ ຢູ່ໃນທ່າມກາງມະນຸດທັງຫລາຍ.

## ກ. ວ່າດ້ວຍນິມິດທັງຫລາຍ

### ໑. ນິມິດແຫ່ງພຣະຣັສມີຂອງພຣະເຢໂຮວາ

(໑:໒໘)

ເປັນນິມິດທີ່ເປັນອິດທິພົນ ຕໍ່ຄວາມຄິດແລະຄວາມເຫລມາຂອງເອເຊກຽນຢ່າງຫລວງຫລາຍ ພາຍຫລັງທີ່ເອເຊກຽນໄດ້ເຫັນນິມິດນີ້ອອກໄປຈາກວິຫານ ແລະຈາກກຸງເຢຣູຊາເລັມ ເພາະເນື່ອງດ້ວຍຄວາມອະທັມຂອງພວກຢູດານັ້ນ ນິມິດວັນນີ້ກໍໄດ້ກັບຄືນມາຢູ່ໃນພຣະວິຫານໃໝ່

(໔໓:໔;໓໗:໒໗)

### ໒. ນິມິດແຫ່ງກະດູກແຫ້ງທັງຫລາຍ ບົດທີ ໓໗

ເປັນຄຳປຽບທຽບ ເຖິງຊາວ ອິສຣາເອັນ ເມື່ອເວລາຕົກເປັນທາດທີ່ເມືອງບາບີໂລນ ຄືພວກເຂົາເປັນເໝືອນກະດູກແຫ້ງທີ່ບໍ່ມີຊີວິດ ແຕ່ດ້ວຍອຳນາດຂອງພຣະວິນຍານພວກເຂົາຈະກັບມີຊີວິດມາປະຕິບັດພຣະເຈົ້າອີກ.

### ໓. ນິມິດທີ່ສແດງອານາຈັກຂອງ ເມຊີອາທັງ-ຫລາຍ (໔໐–໔໘)

ເປັນນິມິດທີ່ສແດງວ່າອານາຈັກ ຂອງພຣະ ເມຊີອາທີ່ຈະມີມາ

ມັນຈະເປັນຢ່າງໃດ    ເອເຊກຽນໄດ້ເຫັນລັກສະນະອາການ
ຂອງເມືອງໃໝ່ນີ້

## ຊ. ວ່າດ້ວຍຄຳປຽບທຽບ

໑. ໃນບົດທີ ໔–໕    ໝາຍເຖິງກຸງເຢຣູຊາເລັມຖືກລ້ອມໄວ້

໒. ໃນບົດທີ່ ໑໒:໑–໑໖    ໝາຍເຖິງການປົບໜີຂອງກະສັດເຊເດເຊັຍເຊ

໓. ໃນບົດທີ ໓໗:໑໕–໒໘    ໝາຍເຖິງການຮ່ອມກັນຂອງຊາວຢູດາກັບຊາວອິສຣາເອັນ

## ຍ. ວ່າດ້ວຍບົດສຳຄັນ

ບົດທີ່ ໑    ນິມິດແຫ່ງພຣະຣັສມີຂອງພຣະເຢໂຮວາ
„ ໒–໓    ເມືອຊົງເອີ້ນເອົາເອເຊກຽນ
„ ໑໘    ຕັກເຕືອນໃຫ້ຫລົບຕັ້ງໃຈໃໝ່
„ ໓໓    ໜ້າທີ່ຂອງຜູ້ເຝົ້າຍາມ
„ ໓໔    ແກະທີ່ສູນເສັຍ
„ ໓໖    ຄຳເທສນາກ່ຽວກັບໃຈໃໝ່
„ ໓໗    ນິມິດແຫ່ງກະດູກແຫ້ງ
„ ໔໗    ບໍ່ແຫ່ງພຣະຄຸນຂອງພຣະເຈົ້າ

# ໑໐. ການແບ່ງເປັນພາກ

## ພາກທີ ໑ ກ່ອນກຸງເຢຣູຊາເລັມຖືກທຳລາຍ

ບົດ ໗-໒໔

ບົດ ໑-໓ ເອເຊກຽນໄດ້ເຫັນນິມິດແລະໄດ້ຍິນຄຳເອີ້ນຂອງພຣະເຈົ້າ

,, ໔-໗ ກຸງເຢຣູຊາເລັມຈະຖືກທຳລາຍ

,, ໘-໑໑ ການຊົ່ວຮ້າຍໄດ້ເກີດມີໃນພຣະວິຫານຂອງພຣະເຈົ້າ

,, ໑໒-໑໙ ການບໍ່ເຊື່ອຂອງພວກຢູດາ ການເສື່ອມເສັຍຂອງພວກທຳນວາຍປອມແລະຄຳຕັກເຕືອນໃຫ້ລະວັງ

ບົດ ໒໐-໒໓ ຄຳປະກາດວ່າພວກເຂົາຈະຖືກໂທດ

ບົດ ໒໔ ກຸງເຢຣູຊາເລັມຖືກລ້ອມໄວ້

## ພາກທີ ໒ ເມື່ອເວລາກຸງເຢຣູຊາເລັມຖືກລ້ອມໄວ້

ບົດ ໒໕-໓໒

ຄຳທຳນວາຍຕົກຖືກພົລເມືອງ ໗ ພວກຄື: ຊາວອາໂມນ, ຊາວໂມອາບ, ຊາວເອດອມ, ຊາວຟີລິດຕິນ, ຊາວຕີໂລ, ຊີໂດນ ກັບຊາວເອຢິບໂຕ

## ພາກທີ ໓ ພາຍຫລັງກຸງເຢຣູຊາເລັມຖືກທຳລາຍ

ບົດ ໓໓ ເຖິງ ໔໘ ໃນພາກນີ້ໄດ້ກ່າວເຖິງການຈັດຕັ້ງ

## ຊາວອິສຣາເອັນຂຶ້ນໃໝ່

ບົດທີ ໓໓ ໜ້າທີ່ຂອງພວກຄົນຍາມ ແລະມີຂ່າວວ່າກຸງເຢຣູຊາເລັມຖືກທຳລາຍ

,, ໓໔ ເຈົ້າດາວິດ ຜູ້ໃໝ່ ຈະແທນ ຜູ້ລ້ຽງ ແພະ ທັງຫລາຍ

,, ໓໕ ຄຳທຳນວາຍຖືກຊາວເອດອມ

,, ໓໖–໓໗ ການຈັດຕັ້ງພວກອິສຣາເອັນຂຶ້ນໃໝ່ ນິມິດແຫ່ງ ຕະກູນ ທັງ ຫລາຍ ພວກ ຢູດາ ກັບພວກອິສຣາເອັນຈະເປັນພວກດຽວກັນອີກ

,, ໓໘–໓໙ ເອເຊກຽນເຫັນນິມິດຊຶ່ງກ່ຽວກັບການເລວເລິກຕັ້ງໃຫຍ່ໃນວັນຂອງພຣະເຢໂຮວາເປັນຄຳທຳນວາຍຖືກທ່ານໂຄກ

,, ໔໐–໔໖ ນິມິດເຂົ້າໄປໃນເມືອງໃໝ່, ວິຫານໃໝ່ ການຂາບໄຫວ້ຢ່າງໃໝ່

,, ໔໗–໔໘ ການແບ່ງປະເທດໃໝ່ຣະຫວ່າງ ໑໔ ຕະກູນ